


ຮູບພາບ: ແມ່ນ້ຳສາກົນ

# ທະນາຄານໂລກແລະເຂື່ອນ

## ພາກ 2: ປັດເປົ່າ ບັນດາຄວາມເຊື່ອ ກ່ຽວກັບ ນ້ຳເທີນ 2

ດ້ວຍປະຫວັດຜົນງານດ້ານເຂື່ອນອັນເຕັມປ່ຽມຂອງຕົນ, ທະນາຄານໂລກໄດ້ໃຫ້ຄຳໝັ້ນສັນຍາວ່າ ເຂື່ອນນ້ຳເທີນ 2 ຢູ່ລາວ ຈະເປັນຕົວແບບໃຫ້ແກ່ພະລັງງານໄຟຟ້ານ້ຳຕົກແບບຍືນຍົງ ເມື່ອທະນາຄານໂລກໄດ້ຮັບຮອງເອົາໂຄງການໃນປີ 2005. ຕັ້ງແຕ່ນັ້ນມາ, ທະນາຄານໂລກໄດ້ອ້າງເຖິງຜົນສຳເລັດຂອງໂຄງການດັ່ງກ່າວ ເພື່ອອະທິບາຍເຫດຜົນໃນການຍົກລະດັບການສະໜອງເງິນກູ້ໃຫ້ແກ່ໂຄງການໄຟຟ້ານ້ຳຕົກໃນທົ່ວໂລກ. ສິບປີຕໍ່ມາ, ການອ້າງເຖິງຜົນສຳເລັດຂອງນ້ຳເທີນ 2 ຍັງເປັນຈິງຢູ່ບໍ່?

"ພວກເຮົາທຸກຍາກ. ພວກເຮົາເຄີຍອາໄສແມ່ນ້ຳລຳເຊເປັນແຫຼ່ງທຳມາຫາກິນ. ປະຈຸບັນແມ່ນບໍ່ມີຫຍັງ", ເປັນຄຳເວົ້າຂອງຜູ້ຍິງຄົນໜຶ່ງທີ່ອາໄສຢູ່ແຄມນ້ຳເຊບັ້ງໄຟ, ຊຶ່ງເປັນແມ່ນ້ຳຢູ່ລາວທີ່ຮັບໃຊ້ຊີວິດການເປັນຢູ່ຂອງປະຊາຊົນຫຼາຍຮ້ອຍພັນຄົນ. ບ່ອນຊຶ່ງໃນເມື່ອກ່ອນເຄີຍເປັນແຫຼ່ງການປະມົງທີ່ອຸດົມສົມບູນ ດຽວນີ້ແມ່ນໄດ້ຫຼຸດລົງຫຼາຍ ອັນເປັນຜົນເນື່ອງຈາກທວນຕົ້ນນ້ຳຂອງການພັດທະນາພະລັງງານໄຟຟ້ານ້ຳຕົກ.

ໃນປີ 2005, ທະນາຄານໂລກໄດ້ປະກາດສະໜັບສະໜູນເຂື່ອນນ້ຳເທີນ 2 (NT2) ໃນພາກກາງຂອງລາວ, ເພື່ອສ້າງເງື່ອນໄຂໃຫ້ແກ່ການສະໜອງທຶນເພີ່ມເຕີມຈາກບັນດາທະນາຄານພັດທະນາ ແລະພາກສ່ວນສະໜອງທຶນພາກເອກະຊົນ. ດ້ວຍຂະໜາດ 1,070 ເມກາວັດ, ນ້ຳເທີນ 2 ໄດ້ຖືເປັນຕົວສ້າງລາຍໄດ້ເງິນຕາຕ່າງປະເທດໃຫ້ແກ່ລາວ ຊຶ່ງເປັນປະເທດທີ່ຍັງຕ້ອງການເງິນສົດສູງ. ນ້ຳເທີນ 2 ຍັງຈະຊ່ວຍໃຫ້ທະນາຄານໂລກກ້າວສູ່ການສະໜອງທຶນໃຫ້ແກ່ເຂື່ອນຂະໜາດໃຫຍ່ໃນທົດສະວັດ. ທະນາຄານໂລກໄດ້ຖອນຕົວອອກມາຫຼາຍຈາກຂະແໜງການດັ່ງກ່າວ ພາຍຫຼັງມີການວິພາກວິຈານກ່ຽວອ້ອມຜົນກະທົບທີ່ເກີດຈາກເຂື່ອນຂອງຕົນ.

ພາຍຫຼັງຂະບວນການຂອງຄະນະກຳມະການໂລກວ່າດ້ວຍເຂື່ອນ (WCD)[1] ຊຶ່ງໄດ້ລົງບັນທຶກກ່ຽວກັບບັນຫາຜົນກະທົບຂອງເຂື່ອນຕໍ່ກັບສິ່ງແວດລ້ອມ ແລະຊຸມຊົນ, ທະນາຄານໂລກໄດ້ໃຫ້ຄຳໝັ້ນສັນຍາວ່າ ນ້ຳເທີນ 2 ຈະເປັນວິທີທາງໃໝ່ໃຫ້ແກ່ພະລັງງານໄຟຟ້ານ້ຳຕົກຂະໜາດໃຫຍ່, ໂດຍເອີ້ນໂຄງການເປັນ "ກໍລະນີທົດສອບ" ໜຶ່ງ ຊຶ່ງມີ "ຄວາມສາມາດກາຍເປັນຕົວແບບ



ຄອບຄົວຊາວບ້ານທີ່ຢູ່ລຸ່ມເຂື່ອນນ້ຳເທີນ 2 ລາຍງານວ່າກຳລັງປະເຊີນການຂາດແຄນອາຫານ ເນື່ອງຈາກສູນເສຍສິດເຂົ້າເຮັດສວນຕາມແຄມແມ່ນ້ຳທີ່ອຸດົມສົມບູນ ແລະການຜັນຜວນຂອງລະດັບນ້ຳໄດ້ທຳລາຍຜົນລະປູກຂອງເຂົາເຈົ້າທີ່ຢູ່ຕາມລຳນ້ຳ. ພະຈິກ 2014.
ຮູບພາບ: ແມ່ນ້ຳສາກົນ.

ໃນວົງກວ້າງ." ດ້ວຍເຫດນັ້ນ, ທະນາຄານໂລກຈຶ່ງໄດ້ລົງທຶນຢ່າງມະຫາສານ ບໍ່ວ່າຈະເປັນດ້ານເວລາ, ເງິນ, ແລະກຳລັງຄົນ ເຂົ້າໃນການບໍລິຫານບັນດາສິ່ງທ້າທາຍຂອງການພັດທະນາທີ່ສະລັບຊັບຊ້ອນ ທີ່ໂຄງການຄືກັບນ້ຳເທີນ 2 ໄດ້ກໍ່ຂຶ້ນ.

ຕັ້ງແຕ່ເຂື່ອນເລີ່ມຜະລິດພະລັງງານໃນປີ 2010, ທະນາຄານໂລກໄດ້ສະແດງໃຫ້ເຫັນວ່າ ໂຄງການປະສົບຜົນສຳເລັດ, ແລະກະທັ້ງກ້າວໄປເຖິງການຈ້າງໃຫ້ມີການຂຽນປຶ້ມກ່ຽວກັບໂຄງການດັ່ງກ່າວ, ໂດຍໃສ່ຊື່ວ່າ ການສ້າງເຂື່ອນໜຶ່ງທີ່ດີກວ່າ. ຄຳອ້າງຫຼັກຈຳນວນໜຶ່ງທີ່ທະນາຄານໂລກໄດ້ນຳໃຊ້ຢ່າງຕໍ່ເນື່ອງກ່ຽວກັບນ້ຳເທີນ 2 ແມ່ນວ່າໂຄງການໄດ້ນຳພາໄປສູ່ການຫຼຸດຜ່ອນຄວາມທຸກຍາກຢ່າງຊັດເຈນ; ການລົງທຶນແບບທີ່ດີທີ່ສຸດໄດ້ຊ່ວຍໃຫ້ຊຸມຊົນທີ່ຖືກຍົກຍ້າຍຖິ່ນຖານມີຊີວິດການເປັນຢູ່ທີ່ດີຂຶ້ນ; ແລະວ່າຜົນກະທົບຕໍ່ກັບຊຸມຊົນລຸ່ມເຂື່ອນໄດ້ຮັບການບໍລິຫານຈັດການຢ່າງມີປະສິດທິຜົນ. ແຕ່ໜ້າເສຍດາຍ, ຄືດັ່ງທີ່ໄດ້ຍົກຂຶ້ນ ໂດຍຄະນະຊ່ຽວຊານເອກະລາດຂອງທະນາຄານໂລກເອງ, ຊຶ່ງໄດ້ວິພາກວິຈານຫຼາຍຂຶ້ນເລື້ອຍໆ ກ່ຽວກັບໂຄງການຕະຫຼອດອາຍຸໂຄງການ, ຄຳອ້າງເຫຼົ່ານັ້ນບໍ່ໄດ້ສະທ້ອນໃຫ້ເຫັນຊັດເຈນຕໍ່ຄວາມເປັນຈິງທີ່ເກີດຂຶ້ນໃນພາກສະໜາມ.

ເນື່ອງຈາກທະນາຄານໂລກຍັງຄົງສືບຕໍ່ອ້າງອີງເຖິງຄວາມສຳເລັດຂອງນ້ຳເທີນ 2 ເພື່ອເປັນເຫດຜົນໃຫ້ແກ່ການລົງທຶນເພີ່ມຂອງຕົນໃນພະລັງງານໄຟຟ້ານ້ຳຕົກແຕໄນເຈີຫາເນປາລ, ມັນເຖິງເວລາທີ່ຈະຕ້ອງໄດ້ເບິ່ງໃກ້ເຂົ້າອີກສິ່ງທີ່ຢູ່ເບື້ອງຫຼັງບັນດາຄຳອ້າງຂອງທະນາຄານໂລກ.

## ຄວາມເຊື່ອທີ່ 1: ການຫຼຸດຜ່ອນຄວາມທຸກຍາກ

***"NT2 ຈະສ້າງລາຍໄດ້ປະມານ $2 ຕື້ ໃຫ້ແກ່ລາຍຮັບລັດຖະບານ... ຊຶ່ງລັດຖະບານຈະໃຊ້ລາຍຮັບດັ່ງກ່າວເພື່ອຫຼຸດຜ່ອນຄວາມທຸກຍາກ"*** –
ແຜ່ນພັບກ່ຽວກັບພະລັງງານໄຟຟ້ານ້ຳຕົກຂອງທະນາຄານໂລກ, 2014

ເຫດຜົນທີ່ທະນາຄານໂລກຊ່ວຍໜູນນ້ຳເທີນ 2 ແມ່ນຍ້ອນວ່າການຄວບຄຸມແມ່ນ້ຳຂອງຕົນເປັນໜຶ່ງໃນໜ້ອຍທາງເລືອກສຳລັບປະເທດລາວໃນການສ້າງລາຍຮັບລັດຖະບານທີ່ມີຄວາມຕ້ອງການສູງຫຼາຍ. ແມ່ນແທ້, 95% ຂອງພະລັງງານຂອງໂຄງການແມ່ນສົ່ງອອກໄປປະເທດເພື່ອນບ້ານ ຄື ປະເທດໄທ. ດັ່ງນັ້ນ ເຫດຜົນການພັດທະນາໂຄງການແລະຄວາມສຳເລັດໃນທີ່ສຸດຂອງໂຄງການ ແມ່ນຍາມໃດກໍໄດ້ຂຶ້ນເປັນສ່ວນໃຫຍ່ຢູ່ກັບການສ້າງລາຍຮັບເພື່ອສະໜອງທຶນໃຫ້ແກ່ໂຄງການພັດທະນາຕ່າງໆ ທີ່ແນໃສ່ຫຼຸດຜ່ອນຄວາມທຸກຍາກໃນປະເທດ.

ເນື່ອງຈາກການສໍ້ລາດບັງຫຼວງເຮື້ອຮັງແລະສິ່ງທ້າທາຍໃນການບໍລິຫານຢູ່ລາວ, ທະນາຄານໂລກດັ່ງເປັນໜຶ່ງເງື່ອນໄຂຂອງການສະໜອງທຶນໄດ້ກຳນົດບັນດາມາດຕະການແບບວິສາມັນຜ່ານການສ້າງໂຄງການບໍລິຫານລາຍຮັບແລະລາຍຈ່າຍ ເພື່ອຕິດຕາມລາຍຮັບຈາກໂຄງການແລະຮັບປະກັນການໃຊ້ຈ່າຍລາຍຮັບເຂົ້າໃນໂຄງການພັດທະນາ.

ເຖິງຢ່າງໃດກໍຕາມ, ເຖິງໄດ້ລາຍງານວ່າ ນ້ຳເທີນ 2 ໄດ້ "ສ້າງລາຍຮັບເກີນຄາດໝາຍ" ດ້ວຍການສົ່ງອອກໄຟຟ້າລື່ນເປົ້າໝາຍ, ທະນາຄານໂລກຍອມຮັບວ່າໜ້ອຍກວ່າເຄິ່ງໜຶ່ງຂອງລາຍຮັບໄດ້ຮັບການລົງບັນຊີຄົບຖ້ວນ, ຊຶ່ງເຫັນວ່າຫຼຸດລົງ.

ບໍ່ພຽງແຕ່ວ່າລັດຖະບານຂອງ ສປປ.ລາວ ບໍ່ໄດ້ພິມເຜີຍແຜ່ຖານະການເງິນຫຼືການກວດສອບ, ໃນໄລຍະຫ້າປີຕັ້ງແຕ່ນ້ຳເທີນ 2 ເລີ່ມດຳເນີນການ, ບໍລິສັດບໍ່ໄດ້ເປີດເຜີຍຕົວເລກລາຍຮັບ. ດ້ວຍຂໍ້ຈຳກັດອັນໜັກໜ່ວງຕໍ່ສິດເສລີພາບດ້ານການເມືອງແລະພົນລະເຮືອນ, ປະຊາຊົນລາວບໍ່ມີບ່ອນໃຫ້ຮຽກຮ້ອງຄວາມໂປ່ງໃສແລະຄວາມຮັບຜິດຊອບ. ແທນທີ່ຈະຮັບປະກັນຫຼຸດຜ່ອນຄວາມທຸກຍາດສຳລັບປະເທດລາວ, ໂຄງການຊ້ຳພັດແຮ່ງມີຜົນກະທົບໜັກໜ່ວງຕໍ່ຜູ້ທີ່ແບກພາລະຕົ້ນທຶນຂອງໂຄງການ.

## ຄວາມເຊື່ອທີ່ 2: ຊີວິດຂອງຊຸມຊົນທີ່ຖືກຍົກຍ້າຍໄດ້ຮັບການປັບປຸງໃຫ້ດີຂຶ້ນ

***"ຄົວເຮືອນທີ່ຖືກຍົກຍ້ານສ່ວຍໃຫຍ່ ແມ່ນດີຂຶ້ນໃນປະຈຸບັນຫຼາຍກວ່າທີ່ເຂົາເຈົ້າເປັນຢູ່ກ່ອນການມີໂຄງການ."*** –
ບົດລາຍງານຄວາມຄືບໜ້າ ປີ 2013, ທະນາຄານໂລກ

ຈຸດຂາຍຫຼັກຂອງທະນາຄານໂລກຕໍ່ກັບນ້ຳເທີນ 2 ແມ່ນຂະບວນການຍົກຍ້າຍແລະຟື້ນຟູເກືອບ 6,300 ຄົນ ທີ່ໄດ້ຖືກບັງຄັບໃຫ້ຍ້າຍອອກຈາກບ່ອນທີ່ຈະສ້າງອ່າງເກັບນ້ຳຂອງເຂື່ອນ. ທະນາຄານໂລກໄດ້ໃຫ້ບູລິມະສິດຢ່າງຖືກຕ້ອງແລ້ວແກ່ການຍົກຍ້າຍປະຊາຊົນ, ເນື່ອງຈາກວ່າບົດລາຍງານຂອງຄະນະກຳມະການໂລກວ່າດ້ວຍເຂື່ອນແລະການຄົ້ນຄ້ວາຂອງທະນາຄານໂລກເອງໄດ້ບັນທຶກກ່ຽວກັບຄວາມທຸກຍາກຂຶ້ນໃນໄລຍະຍາວທີ່ຊຸມຊົນປະເຊີນຈາກການເຄື່ອນຍ້າຍທີ່ເປັນສາເຫດມາຈາກເຂື່ອນ.

ເພື່ອຫຼີກລ່ຽງຜົນດັ່ງກ່າວ, ທະນາຄານໂລກແລະຄູ່ຮ່ວມງານຂອງຕົນໄດ້ຕົກລົງໃນການລົງທຶນເກືອບ $40 ລ້ານ ແລະເວລາຂອງພະນັກງານຢ່າງຫຼວງຫຼາຍເພື່ອອອກແບບແລະຈັດຕັ້ງປະຕິບັດແຜນການຍົກຍ້າຍປະຊາຊົນ, ທີ່ລວມເອົາການລົງທຶນອັນຫຼວງຫຼາຍເຂົ້າໃນສ້າງສະຖານທີ່ຕັ້ງຖິ່ນຖານໃໝ່ຂອງປະຊາຊົນຢູ່ພູພຽງນາກາຍ. ອັນທີ່ຈິງ, ມີຂໍ້ສົງໄສເລັກນ້ອຍວ່າ ຄອບຄົວທີ່ຖືກຍົກຍ້າຍປະຈຸບັນມີພື້ນຖານໂຄງລ່າງທ້ອງຖິ່ນທີ່ດີກວ່າເກົ່າຍ້ອນໂຄງການ, ລວມທັງເຮືອນ, ໄຟຟ້າ, ຫົນທາງ, ໂຮງຮຽນ, ແລະສຸຂາພິບານ.

ເຖິງຢ່າງໃດກໍຕາມ, ໃນຊຸມປີຕັ້ງແຕ່ພວກເຂົາເຈົ້າຖືກຍົກຍ້າຍ, ຊຸມຊົນທີ່ຖືກຍົກຍ້າຍຍັງປະສົບກັບຄວາມຫຍຸ້ງຍາກຈາກການສູນເສຍວິຖີດຳລົງຊີວິດທີ່ເຄີຍປະຕິບັດຜ່ານມາ, ໂດຍໄດ້ສູນເສຍການເຂົ້າເຖິງໄຮ່ນາຕາກ້າຂອງເຂົາເຈົ້າ, ປ່າໄມ້, ແລະຜືນດິນທີ່ມີທົ່ງຫຍ້າ. ຄຸນນະພາບທີ່ຕ່ຳແລະຂະໜາດທີ່ນ້ອຍຂອງຕອນດິນ ໃນສະຖານທີ່ຕັ້ງຖິ່ນຖານໃໝ່ຍັງສືບຕໍ່ສ້າງບັນຫາໃຫ້ແກ່ຊາວບ້ານຜູ້ທີ່ບໍ່ສາມາດປູກເພື່ອເປັນອາຫານໃຫ້ພຽງພໍຫຼືລ້ຽງສັດ. ເນື່ອງຈາກເນື້ອທີ່ຈຳກັດຢູ່ພູພຽງນາກາຍ, ຫຼາຍຄອບຄົວໄດ້ຫາທາງຊື້ດິນເພີ່ມຢູ່ບ່ອນອື່ນຫຼືສ້າງລາຍຮັບຈາກທີ່ດິນນາຫຼືສວນຂອງຄອບຄົວໃນສະຖານທີ່ຫ່າງໄກ.

## ບັນດາຄວາມເຊື່ອອື່ນ

- **ຄວາມເຊື່ອ:** *ນໍ້າເທີນ 2 ຜະລິດພະລັງງານສີຂຽວ.* **ຄວາມຈິງ:** ບົດສຶກສາປີ 2014 ທີ່ຈ້າງໂດຍຜູ້ສະໜັບສະໜູນໂຄງການ ໄດ້ສະແດງໃຫ້ເຫັນວ່າ ອ່າງເກັບນໍ້າໄດ້ປ່ອຍທາດເມຕານປະລິມານ ຫຼາຍກວ່າທີ່ຄາດໄວ້. ເມຕານເປັນອາຍເຮືອນແກ້ວທີ່ມີສັກກາຍະພາບ 25 ເທົ່າຂອງກາກບອນໄດອົກຊ່າຍ, ແລະບົດສຶກສາວິທະຍາສາດ ສະແດງໃຫ້ເຫັນວ່າ ການປ່ອຍທາດເມຕານຈາກອ່າງເກັບນໍ້າຂອງ ເຂື່ອນເປັນສາເຫດສຳຄັນຂອງພາວະໂລກຮ້ອນ.
- **ຄວາມເຊື່ອ:** *ນໍ້າເທີນ 2 ເປັນຕົວແບບທີ່ມີການປຶກສາຫາລືກັບ ສາທາລະນະຊົນ.* **ຄວາມຈິງ:** ປາສະຈາກສິດເສລີພາບໃນການເວົ້າ ຢູ່ລາວ ແລະຂໍ້ຈຳກັດອັນໜັກໜ່ວງຕໍ່ກັບສັງຄົມພົນລະເຮືອນ, ຈຶ່ງບໍ່ມີການປຶກສາຫາລືທີ່ມີຄວາມໝາຍ. ຊຸມຊົນລຸ່ມເຂື່ອນບໍ່ຮູ້ຈັກ ໂຄງການຫຼືຜົນກະທົບຂອງເຂື່ອນທີ່ອາດເກີດຂຶ້ນ ຈົນກວ່າພາຍຫຼັງ ມີການຕົກລົງພັດທະນາໂຄງການ.
- **ຄວາມເຊື່ອ:** *ນໍ້າເທີນ 2 ເປັນທາງເລືອກທີ່ດີທີ່ສຸດເທົ່າທີ່ມີຢູ່.* **ຄວາມຈິງ:** ບໍ່ເຄີຍມີການປະເມີນລະອຽດກ່ຽວກັບທາງເລືອກສຳລັບ ການຜະລິດພະລັງງານຫຼືການສ້າງລາຍຮັບຢູ່ລາວ. ເຊັ່ນດຽວກັນ, ການຕົກລົງສົ່ງອອກພະລັງງານແມ່ນອີງຕາມການຄາດຄະເນ ຕົວເລກສູງດ້ານອຸປະສົງໃນປະເທດ. ເມື່ອນໍ້າເທີນ 2 ເລີ່ມຜະລິດ ໄຟຟ້າສຳລັບປະເທດໄທໃນ ປີ 2010, ປະເທດໄທໄດ້ມີພະລັງງານ ເກີນຄວາມຕ້ອງການແລ້ວ.

ໃນຂະນະດຽວກັນ, ປາໃນອ່າງເກັບນໍ້າທີ່ໝາຍໃຫ້ມາທົດແທນການຫາປາ ຕາມແມ່ນໍ້າ ດັ່ງເປັນວິຖີຊີວິດໃນໄລຍະຍາວໄດ້ຫຼຸດລົງຢ່າງໜັກໜ່ວງ, ແລະການຈຳກັດການເຂົ້າເຖິງອ່າງເກັບນໍ້າ, ລວມທັງການອະນຸຍາດ, ໄດ້ໝາຍຄວາມວ່າການເພີ່ມລາຍຮັບທີ່ຄາດໄວ້ຈາກການຫາປາໃນອ່າງເກັບນໍ້າ ສຳຜູ້ຖືກຍົກຍ້າຍຖິ່ນຖານ ແມ່ນບໍ່ໄດ້ເກີດຂຶ້ນໃນຄວາມເປັນຈິງ.

ໃນຂະນະທີ່ການລົງທຶນໃນເບື້ອງຕົ້ນໃນໂຄງລ່າງພື້ນຖານໄດ້ເປັນທີ່ ໜ້າປະທັບໃຈແລະຫຼວງຫຼາຍ, ຄວາມຍືນຍົງຂອງການລົງທຶນດັ່ງກ່າວ ແມ່ນຢູ່ໃນສະພາບບໍ່ແນ່ນອນປາສະຈາກການສະໜອງທຶນສະເພາະໃຫ້ແກ່ ການບຳລຸງຮັກສາແລະສ້ອມແປງ, ແລະບໍ່ເໝາະສົມສຳລັບພົນລະເມືອງ ທີ່ກຳລັງເຕີບໂຕ. ທີ່ສຳຄັນກວ່ານັ້ນ, ແຜນຂອງໂຄງການໃນການຮັບປະກັນວ່າ ຊີວິດການເປັນຢູ່ຂອງຜູ້ທີ່ຖືກຍົກຍ້າຍໄດ້ຮັບການຟື້ນຟູແລະມີຄວາມຍືນຍົງ ໃນໄລຍະຍາວນັ້ນ ແມ່ນບໍ່ໄດ້ປະກົດຜົນເປັນຈິງ.

### ຄວາມເຊື່ອທີ່ 3: ໄດ້ມີການບໍລິຫານຈັດການຜົນກະທົບລຸ່ມເຂື່ອນ

*"ລະດັບຜົນກະທົບລຸ່ມເຂື່ອນ ແມ່ນເປັນໄປຕາມທີ່ຄາດການໄວ້ ຫຼືກະທັ້ງວ່າຕໍ່າກວ່ານັ້ນ"* – ວິດີໂອໂຄສະນາຂອງທະນາຄານໂລກ, 2012

ນໍ້າເທີນ 2 ແມ່ນ ໂຄງການໄຟຟ້ານໍ້າຕົກແບບຜ່ານອ່າງແມ່ນໍ້າ ຊຶ່ງເປັນບ່ອນ ທີ່ຜະລິດພະລັງງານໃນລະຫວ່າງການໂອນຖ່າຍນໍ້າຈາກແມ່ນໍ້າເທີນຫາແມ່ນໍ້າ ເຊບັ້ງໄຟທີ່ນ້ອຍກວ່າຫຼາຍ. ສິ່ງດັ່ງກ່າວໄດ້ພາໃຫ້ເກີດມີການປ່ຽນແປງຢ່າງ ຫຼວງຫຼາຍຕໍ່ກັບອຸທົກກະສາດຂອງແມ່ນໍ້າເຊບັ້ງໄຟ, ລວມທັງການກະທົບ ຕໍ່ຄຸນນະພາບນໍ້າແລະການເພີ່ມລະດັບກະແສນໍ້າຮອບປີຂຶ້ນຢ່າງຫຼວງຫຼາຍ, ຊຶ່ງອາດຖືກກະທົບຮ້າຍແຮງຂຶ້ນຈາກການຂະຫຍາຍໂຄງການໃນອະນາຄົດ.

ພາຍຫຼັງທີ່ໄດ້ເບິ່ງຂ້າມບັນດາຄວາມສ່ຽງທີ່ອາດເກີດຂຶ້ນຕໍ່ແມ່ນໍ້າເຊບັ້ງໄຟ, ທະນາຄານໂລກໄດ້ຖືກກົດດັນໃນກວດກາຜົນກະທົບຕໍ່ກັບປະຊາຊົນຈຳນວນ 120,000 ຜູ້ທີ່ຈະຖືກຜົນກະທົບຢ່າງຮ້າຍແຮງຈາກການປ່ຽນແປງຕໍ່ແມ່ນໍ້າ ເຊບັ້ງໄຟ ແລະສ້າງແຜນການເພື່ອຊົດເຊີຍພວກເຂົາເຈົ້າສຳລັບການສູນເສຍ ຊັບສິນແລະຊ່ວຍຊາວປະມົງແລະຊາວໄຮ່ຊາວນາດັດປັບວິທີການປະຕິບັດ ຕໍ່ກັບແມ່ນນໍ້າທີ່ແຕກຕ່າງໄປໂດຍສິ້ນເຊີງ. ທະນາຄານໂລກໄດ້ສ້າງໂຄງການ ແມ່ນໍ້າລຸ່ມເຂື່ອນເພື່ອສະໜອງທຶນໃຫ້ແກ່ຈຸດປະສົງດັ່ງກ່າວ. ເຖິງຢ່າງໃດ ກໍຕາມ, ພາຍຫຼັງບໍ່ຮອດ 3 ປີຫຼັງການດຳເນີນການ, ໂຄງການດັ່ງກ່າວ ໄດ້ຖືກມອບໃຫ້ແກ່ລັດຖະບານລາວ ແລະຕໍ່ມາກໍຖືກຍຸບເລີກເມື່ອໝົດທຶນ ໄວກ່ອນກຳນົດ.

ເຖິງແມ່ນທະນາຄານໂລກອ້າງວ່າ ຜົນກະທົບຕໍ່ແມ່ນໍ້າລຸ່ມເຂື່ອນ ແມ່ນມີໜ້ອຍທີ່ສຸດ, ນັກຄົ້ນຄ້ວາຜູ້ທີ່ໄດ້ໄປຢ້ຽມຢາມໝູ່ບ້ານລຸ່ມເຂື່ອນ ໃນປີ 2001 ແລະອີກຄັ້ງໜຶ່ງໃນປີ 2014 ໄດ້ພົບວ່າ "ໄດ້ມີການປ່ຽນແປງ ໂດຍພື້ນຖານໃນຄວາມສາມາດຂອງຊາວບ້ານໃນການຫາສະບຽງອາຫານ ແລະລາຍຮັບຈາກການປະມົງຕາມແມ່ນໍ້າເຊບັ້ງໄຟ."[2] ການປ່ຽນແປງ ໃນລະບົບນິເວດຂອງແມ່ນໍ້າ ໄດ້ເຮັດໃຫ້ຊາວບ້ານຈັບປາໄດ້ຫຼຸດລົງຫຼາຍ, ຊຶ່ງໃນເມື່ອກ່ອນເຄີຍເປັນຫຼັກຂອງວິຖີການດຳລົງຊີວິດໃນທ້ອງຖິ່ນ. ຜົນກະທົບແມ່ນສູງກວ່າສຳລັບຜູ້ຍິງ ເນື່ອງຈາກວ່າເຂົາເຈົ້າໄດ້ອາໄສແມ່ນໍ້າ ດັ່ງກ່າວໃນການສ້າງລາຍຮັບ.

ໃນຂະນະດຽວກັນ, ການປູກເຂົ້າໄດ້ຫຼຸດລົງໃນລະຫວ່າງລະດູຝົນຍ້ອນ ນໍ້າຖ້ວມເກີນໄປ ອັນເປັນສາເຫດມາຈາກການປ່ອຍນໍ້າເຂື່ອນ, ແລະແຜນການ ສຳລັບການປູກເຂົ້າໃນລະດູແລ້ງ ແມ່ນລົ້ມເຫຼວເປັນສ່ວນໃຫຍ່ ຍ້ອນຕົ້ນທຶນສູງຂອງໄຟຟ້າທີ່ຈຳເປັນໃຊ້ເພື່ອດູດນໍ້າຈາກແມ່ນໍ້າເຂົ້າເໜືອງ ຝາຍທີ່ຢູ່ສູງກວ່າ. ປະຊາຊົນທີ່ອາໄສຕາມແມ່ນໍ້າເຊບັ້ງໄຟຈົນໄປຮອດ ຈຸດບັນຈົບກັບແມ່ນໍ້າຂອງໄກ 100 ກິໂລແມັດ ແມ່ນຖືກປ່ອຍປະໃນສະພາບ ທີ່ໜັກໜ່ວງກວ່າອີກ.

### ການນຳໃຊ້ຕາມຕົວແບບທີ່ລົ້ມເຫຼວ

ທະນາຄານໂລກສືບຕໍ່ໂຄສະນາບັນດາຄວາມເຊື່ອກ່ຽວກັບໂຄງການນໍ້າເທີນ 2, ໂດຍຍົກໃຫ້ເປັນໂຄງການຕົວແບບສຳລັບໂຄງການເຂື່ອນຂະໜາດໃຫຍ່ອື່ນ. ສິບປີຫຼັງຈາກການຮັບຮອງແລະຫ້າປີຕັ້ງແຕ່ນໍ້າເທີນ 2 ເລີ່ມຜະລິດພະລັງງານ, ມີຄວາມສຳຄັນທີ່ຈະຕ້ອງໄດ້ທົບທວນແລະຖອດຖອນບົດຮຽນດັ່ງກ່າວ. ບັນຫາແມ່ນປະກົດວ່າທະນາຄານໂລກຍັງສືບຕໍ່ລົ້ມຄວາມຜິດພາດເດີມໆ ຂອງຕົນໃນນໍ້າເທີນ 2 ໃນເຂື່ອນຮຸ່ນໃໝ່:

- **ການຫຼຸດຜ່ອນຄວາມທຸກຍາກຈາກເຂື່ອນອິນກາ 3.** ຄ້າຍຄືກັບນໍ້າເທີນ 2, ເຫດຜົນການພັດທະນາສຳລັບເຂື່ອນອິນກາ 3 ມູນຄ່າ $14 ຕື້ ໃນສາທາລະນະລັດ ປະຊາທິປະໄຕກົງໂກ (DRC) ແມ່ນກ່ຽວກັບ ການສ້າງລາຍຮັບສຳລັບລັດຖະບານເພື່ອຫຼຸດຜ່ອນຄວາມທຸກຍາກ. ເຖິງຢ່າງໃດກໍຕາມ, ໂອກາດໃນການຮັບປະກັນການລົງບັນຊີແລະ ການນຳໃຊ້ທີ່ໂປ່ງໃສຂອງລາຍໄດ້ຈາກໂຄງການອິນກາ 3 ແມ່ນມືດມົວໃນ DRC, ຊຶ່ງອາດໜັກໜ່ວງກວ່າ ປະເທດລາວອັນເນື່ອງ ຈາກການສໍ້ລາດບັງຫຼວງແລະການບໍລິຫານການເງິນທີ່ຜິດພາດ. ເບິ່ງປະຫວັດແລ້ວບໍ່ໄດ້ໃຫ້ກຳລັງໃຈເລີຍ. ເຖິງແມ່ນວ່າໄດ້ມີການເຮັດວຽກ ຢ່າງຫຼວງຫຼາຍ ເພື່ອຮັບປະກັນຄວາມໂປ່ງໃສໃນຂະແໜງການບໍ່ແຮ່ຂອງ

> *"ນໍ້າເທີນ 2 ໄດ້ຢືນຢັນສິ່ງທີ່ຂ້າພະເຈົ້າສົງໄສ ມາດົນນານຄືໜ້າທີ່ໃນການສ້າງເຂື່ອນຂະໜາດໃຫຍ່ ແມ່ນສະລັບຊັບຊ້ອນເກີນໄປ ແລະສ້າງຜົນເສຍຫາຍ ຫຼາຍເກີນໄປຕໍ່ຊັບພະຍາກອນທຳມະຊາດອັນລໍ້າຄ່າ."*
>
> Thayer Scudder, ສະມາຊິກຄະນະຊ່ຽວຊານ ສັງຄົມແລະສິ່ງແວດລ້ອມສາກົນ

INTERNATIONAL RIVERS
people • water • life



ການຂາດການກຳຈັດຊີວະມວນທີ່ເຂດອ່າງເກັບນ້ຳໄດ້ພາໃຫ້ການປ່ອຍອາຍເມຕານໃນລະດັບສູງກວ່າທີ່ຄາດໄວ້ ແລະອາຍເຮືອນແກ້ວອື່ນໆ. ພະຈິກ 2014. ຮູບພາບ: ແມ່ນ້ຳສາກົນ.

DRC ຜ່ານຄວາມຄິດລິເລີ່ມສ້າງຄວາມໂປ່ງໃສໃນອຸດສາຫະກຳຂຸດຄົ້ນ (EITI), ມີຫຼັກຖານພຽງເລັກນ້ອຍທີ່ສະດງໃຫ້ເຫັນວ່າ ເງິນຈຳນວນດັ່ງກ່າວໄປເຖິງຜູ້ທີ່ຕ້ອງການມັນ.

- **ການຍົກຍ້າຍປະຊາຊົນຢູ່ເຂື່ອນກັນດາຈີໃນປະເທດໄນເຈີ.** ທະນາຄານໂລກໄດ້ທຸ້ມເທເອົາໃຈໃສ່ຢ່າງສູງໃນໄລຍະທຳອິດຂອງຂະບວນການຍົກຍ້າຍປະຊາຊົນ (5,410 ຄົນ) ຢູ່ເຂື່ອນກັນດາຈີໃນປະເທດໄນເຈີ, ຊຶ່ງເປັນທີ່ໃຫ້ກຳລັງໃຈດ້ວຍການລວມເອົາການສຳຮອງທຶນສຳລັບການແບ່ງປັນຜົນປະໂຫຍດຈາກລາຍຮັບ ເພື່ອຊ່ວຍໜູນຊຸມຊົນທີ່ຖືກຍົກຍ້າຍ. ເຖິງຢ່າງໃດກໍຕາມ, ແຜນການຟື້ນຟູຊີວິດການເປັນຢູ່ຍັງອາໄສແມ່ນ້ຳລຸ່ມເຂື່ອນເພື່ອການກະສິກຳແບບເໝືອງຝາຍ, ຊຶ່ງມີປະຫວັດບໍ່ດີຢູ່ແລ້ວໃນອາຟຼິກກາ, ເພື່ອປ່ຽນແທນວິທີການປູກຝັງຕາມລະດູນ້ຳຝົນ ແລະການຫາປາທີ່ເຄີຍປະຕິບັດຜ່ານມາ. ເຖິງວ່າດ້ວຍໂຄງການສ້າງລາຍຮັບຈາກເຂື່ອນສຳລັບຊຸມຊົນ, ປະຊາຊົນທີ່ຖືກຍົກຍ້າຍອາດພົບຄວາມຫຍຸ້ງຍາກໃນການຊອກຫາລາຍຮັບສຳລັບເຂົາເຈົ້າເອງ. ຄາດວ່າຈະມີສິ່ງທ້າທາຍເພີ່ມຂຶ້ນອີກໃນການຮັບປະກັນດ້ານສະບຽງອາຫານ ເມື່ອໄດ້ມີການດຳເນີນການຍົກຍ້າຍໄລຍະສອງ (32,500 ຄົນ).
- **ຜົນກະທົບລຸ່ມເຂື່ອນຈາກເຂື່ອນໂຟມີໃນປະເທດກີເນ.** ປະຈຸບັນທະນາຄານໂລກກຳລັງສະໜັບສະໜູນວຽກງານກະກຽມຢູ່ຕົ້ນນ້ຳຂອງແມ່ນ້ຳໄນເຈີ ເພື່ອສ້າງເຂື່ອນໂຟມີໃນປະເທດກີເນຊຶ່ງ, ຄືກັບ ນ້ຳເທີນ 2, ຈະເຮັດໃຫ້ມີການສະຫງົກນ້ຳມະຫາສານຕໍ່ຊຸມຊົນ ຜູ້ທີ່ອາໄສລຸ່ມເຂື່ອນ. ໂດຍສະເພາະກຸ່ມທີ່ອ່ອນແອມີເກືອບ 2 ລ້ານຄົນ ຢູ່ລຸ່ມເຂື່ອນໃນປະເທດມາລີ ຊຶ່ງມີອາຊີບເປັນຜູ້ລ້ຽງສັດ, ປູກເຂົ້າແລະຫາປາ ຜູ້ທີ່ອາໄສຝົນປີຢູ່ເຂດອິນເນີໄນເຈີເດວຕາ, ຊຶ່ງເປັນໜຶ່ງໃນພື້ນທີ່ຊຸ່ມນ້ຳທີ່ໃຫຍ່ທີ່ສຸດຂອງທະວີບອາຟຼິກກາ, ເພື່ອໃຫ້ທົ່ງຫຍ້າແລະດິນດຳນ້ຳຊຸ່ມ, ແລະເພື່ອຮັກສາແລະເຕີມເຕັມປະລິມານປາ. ເຂື່ອນໂຟມີຖືກຮຽກໃຫ້ເປັນ “ເຂື່ອນອະເນກປະສົງ” ວ່າຈະອຳນວຍຄວາມສະດວກໃຫ້ແກ່ການຂະຫຍາຍຊົນລະປະທານຂະໜາດໃຫຍ່ໄປສູ່ທີ່ດິນທີ່ໄດ້ຈັດສັນໃຫ້ຜູ້ລົງທຶນຕ່າງປະເທດໃນເຂດຊົນລະປະທານຂອງມາລີ. ຄວາມໝັ້ນໃຈຂອງທະນາຄານໂລກທີ່ວ່າ ການຊົດເຊີຍກັນລະຫວ່າງຂໍ້ດີແລະຂໍ້ເສຍ ແມ່ນເປັນການປອບໃຈເລັກນ້ອຍແກ່ກຸ່ມທີ່ດ້ອຍກວ່າໃນເຂດອິນເນີໄນເຈີ ເດວຕາ.

ນ້ຳເທີນ 2 ຖືກຄາດໝາຍໃຫ້ມີຄວາມແຕກຕ່າງ, ໂດຍທີ່ທະນາຄານໂລກໄດ້ພະຍາຍາມຢ່າງສູງເພື່ອສະເໜີຕົວແບບທີ່ດີສຳລັບການບໍລິຫານຄວາມສ່ຽງຂອງເຂື່ອນຂະໜາດໃຫຍ່ ທີ່ມີຕໍ່ສິ່ງແວດລ້ອມແລະຊຸມຊົນ, ແລະໃຫ້ມີການພັດທະນາທີ່ແທ້ຈິງ. ເຖິງຢ່າງກໍຕາມ ທະນາຄານໂລກຍັງລົງທຶນອີກໃນໂຄງການເຂື່ອນຂະໜາດໃຫຍ່ດ້ວຍການໃຫ້ສັນຍາ “ພະລັງງານໄຟຟ້ານ້ຳຕົກແບບຍືນຍົງ”, ແຕ່ໜ້າເສຍດາຍ ທະນາຄານໂລກບໍ່ໄດ້ຮຽນຮູ້ບົດຮຽນຄວາມຜິດພາດຂອງຕົນໃນອະດີດ.

### ໝາຍເຫດ

1 ຄະນະກຳມະການໂລກວ່າດ້ວຍເຂື່ອນແມ່ນຂະບວນການທີ່ມີຫຼາຍພາກສ່ວນກ່ຽວຂ້ອງທີ່ຄົ້ນຄວ້າຜົນກະທົບທາງເສດຖະກິດ, ສິ່ງແວດລ້ອມແລະຜົນກະທົບທາງສັງຄົມຂອງເຂື່ອນຂະໜາດໃຫຍ່. The WCD ໄດ້ສະຫຼຸບໃນປີ 2000 ແລະອອກຄຳແນະນຳລະອຽດສຳລັບການພັດທະນາເຂື່ອນຢ່າງມີຄວາມຮັບຜິດຊອບ.

2 *ປະຊາຊົນແລະແມ່ນ້ຳຂອງພວກເຂົາ, ທະນາຄານໂລກແລະເຂື່ອນຂອງຕົນ: ການກັບໄປຢ້ຽມຢາມແມ່ນ້ຳເຊບັ້ງໄຟຢູ່ລາວ* ໂດຍ Ian G. Baird, Bruce P. Shoemaker ແລະ Kanokwan Manorom, ການພັດທະນາແລະການປ່ຽນແປງ, ກັນຍາ 2015.

## ຮ່ວມກັບພວກເຮົາ!

**ຮ່ວມກັບແມ່ນ້ຳສາກົນມື້ນີ້ແລະກາຍເປັນສ່ວນໜຶ່ງຂອງການເຄື່ອນໄຫວໃນທົ່ວໂລກເພື່ອປົກປັກຮັກສາແມ່ນ້ຳແລະສິດທິ.**
**ສະໝັກທີ່ internationalrivers.org**